ທະນາຄານແຫ່ງ ສປປ ລາວ
BANK OF THE LAO PDR
ຂ່າວ NEWS
ໜ່ວຍງານຂ່າວສານ ພະແນກສັງລວມ ຫ້ອງການ ທຫລ
ໂທ /ແຟັກ ( 856-21) 260283

# ທ່ານຮອງນາຍົກ ສົມດີ ດວງດີ ຊີ້ນຳໃຫ້ພັດທະນາ ຕະຫຼາດທຶນ ກ້າວສູ່ຄວາມເຂັ້ມແຂງ



ກອງປະຊຸມຄະນະກຳມະການຄຸ້ມຄອງຫຼັກຊັບ (ຄຄຊ) ຄັ້ງທີ II ປະຈຳປີ 2020 ໄດ້ສຳເລັດລົງໃນວັນທີ 31 ກໍລະກົດ 2020 ທີ່ ສຳນັກງານ ຄຄຊ (ສຄຄຊ) ພາຍໃຕ້ການເປັນປະທານຂອງທ່ານ ສົມດີ ດວງດີ, ຮອງນາຍົກລັດຖະມົນຕີ, ລັດຖະມົນຕີກະຊວງການເງິນ, ປະທານ ຄຄຊ; ພ້ອມນີ້, ກໍ່ມີການເຂົ້າຮ່ວມຂອງທ່ານ ສອນໄຊ ສິດພະໄຊ ຜູ້ວ່າການທະນາຄານແຫ່ງ ສປປ ລາວ (ທຫລ), ຮອງປະທານ ຄຄຊ-ຜູ້ປະຈຳການ, ບັນດາຄະນະກຳມະການຄຸ້ມຄອງຫຼັກຊັບ, ທ່ານນາງ ສາຍສະໝອນ ຈັນທະຈັກ ຫົວໜ້າ ສຄຄຊ, ທ່ານ ເພັດສະຖາພອນ ແກ້ວວົງວິຈິດ ຫົວໜ້າຫ້ອງການ ທຫລ, ປະທານສະພາບໍລິຫານຕະຫຼາດຫຼັກຊັບລາວ (ຕລຊລ) ແລະ ພາກສ່ວນກ່ຽວຂ້ອງ.

ກອງປະຊຸມຄັ້ງນີ້ ໄດ້ເປີດຂຶ້ນທ່າມກາງທີ່ທົ່ວພັກ, ທົ່ວລັດ, ທົ່ວກຳລັງປະກອບອາວຸດ ແລະ ທົ່ວປວງຊົນລາວ ພວມສຸມໃສ່ຈັດຕັ້ງຜັນຂະຫຍາຍເນື້ອໃນມະຕິ X ຂອງພັກໃນທ້າຍສະໄໝ, ສະຫຼຸບຕີລາຄາການຈັດຕັ້ງປະຕິບັດແຜນ 5 ປີ ຄັ້ງທີ VIII (2016-2020) ແລະ ສືບຕໍ່ສ້າງຂະບວນການດຳເນີນກອງປະຊຸມໃຫຍ່ 3 ຂັ້ນ, ການຈັດຕັ້ງປະຕິບັດຜົນສຳເລັດຂອງກອງປະຊຸມສະໄໝສາມັນເທື່ອທີ 9 ສະພາແຫ່ງຊາດ ຊຸດທີ VIII. ສະເພາະຂະແໜງການເງິນ ກໍ່ພວມສຸມໃສ່ທົບທວນຄືນແຜນຍຸດທະສາດການພັດທະນາລະບົບສະຖາບັນການເງິນ-ເງິນຕາ ຂອງ ສປປ ລາວ ໃນໄລຍະປີ 2016-2025 ແລະ ວິໄສທັດຮອດປີ 2030 ໂດຍສະເພາະແຜນຍຸດທະສາດໃນການພັດທະນາຕະຫຼາດທຶນ (2016-2025). ພ້ອມດຽວກັນນີ້, ກໍ່ຢູ່ໃນໄລຍະທີ່ມີຄວາມຫຍຸ້ງຍາກທາງດ້ານເສດຖະກິດ, ການເງິນ, ການແຜ່ລະບາດຂອງເຊື້ອພະຍາດ ແລະ ໄພທຳມະຊາດ ຊຶ່ງໄດ້ສົ່ງຜົນກະທົບບໍ່ໜ້ອຍຕໍ່ການພັດທະນາເສດຖະກິດ-ສັງຄົມຂອງ ສປປ ລາວ.

ພາຍຫຼັງສໍາເລັດກອງປະຊຸມ ຄຄຊ ຄັ້ງທີ I ປະຈໍາປີ 2020 ທີ່ຜ່ານມາ ແມ່ນໄດ້ເອົາໃຈໃສ່ຈັດຕັ້ງປະຕິບັດການເຄື່ອນໄຫວວຽກງານຄຸ້ມຄອງຫຼັກຊັບຢ່າງຕັ້ງໜ້າໃນນັ້ນຜົນສໍາເລັດອັນພົ້ນເດັ່ນແມ່ນໄດ້ສໍາເລັດການສ້າງກົດໝາຍວ່າດ້ວຍຫຼັກຊັບ (ສະບັບປັບປຸງ) ແລະ ສໍາເລັດການຄົ້ນຄວ້າອະນຸຍາດໃນການອອກຈໍາໜ່າຍຮຸ້ນໃຫ້ແກ່ມວນຊົນຄັ້ງທໍາອິດ **(IPO)** ຂອງບໍລິສັດ ເອເນໂກ້ ໄດນາມິກ. ແຕ່ຢ່າງໃດກໍ່ຕາມ,ຍັງຕ້ອງໄດ້ສືບຕໍ່ເອົາໃຈໃສ່ຫຼາຍບັນຫາເພື່ອພັດທະນາຕະຫຼາດທຶນລາວໃຫ້ມີປະສິດທິພາບ, ມີຄວາມໜ້າເຊື່ອຖື ແລະ ມີຄວາມຄຶກຄື້ນກວ່າເກົ່າ.

ກອງປະຊຸມ ຄຄຊ ຄັ້ງທີ II ປະຈໍາປີ 2020 ໄດ້ປຶກສາຫາລືບາງໜ້າວຽກທີ່ສໍາຄັນ ໂດຍທ່ານນາງ ສາຍສະໝອນ ຈັນທະຈັກ ຫົວໜ້າ ສຄຄຊ ໄດ້ລາຍງານຜົນການຈັດຕັ້ງປະຕິບັດມະຕິກອງປະຊຸມ ຄຄຊ ຄັ້ງທີ I ປີ 2020; ລາຍງານຄວາມຄືບໜ້າການກະກຽມຄວາມພ້ອມການເຂົ້າເປັນສະມາຊິກສົມບູນຂອງອົງການຄຸ້ມຄອງຫຼັກຊັບສາກົນ (IOSCO); ນອກນີ້ຍັງມີພາກສ່ວນກ່ຽວໄດ້ນໍາສະເໜີນິຕິກໍາຈໍານວນ 3 ສະບັບໃນນີ້ມີຮ່າງດໍາລັດວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວຂອງຄະນະກໍາມະການຄຸ້ມຄອງຫຼັກຊັບ (ສະບັບປັບປຸງ); ຮ່າງຂໍ້ຕົກລົງວ່າດ້ວຍການຄຸ້ມຄອງຜູ້ລົງທຶນພາຍໃນທີ່ໄປລົງທຶນໃນຫຼັກຊັບຢູ່ຕ່າງປະເທດ (ສ້າງໃໝ່) ແລະ ຮ່າງຂໍ້ຕົກລົງວ່າດ້ວຍການອອກຈໍາໜ່າຍຮຸ້ນ (ສະບັບປັບປຸງ); ຂະນະດຽວກັນ, ຍັງມີການລາຍງານການຈັດຕັ້ງປະຕິບັດວຽກງານຂອງ ສຄຄຊ ປະຈໍາ 6 ເດືອນຕົ້ນປີ 2020 ແລະ ທິດທາງແຜນການ 6 ເດືອນທ້າຍປີ 2020; ລາຍງານການຈັດຕັ້ງປະຕິບັດວຽກງານຂອງ ຕລຊລ ປະຈໍາ 6 ເດືອນຕົ້ນປີ 2020 ແລະທິດທາງແຜນການ 6 ເດືອນທ້າຍປີ 2020.

ທ່ານ ສົມດີ ດວງດີ ຮອງນາຍົກລັດຖະມົນຕີ, ປະທານ ຄຄຊ ໄດ້ສະແດງຄວາມຍ້ອງຍໍຊົມເຊີຍຕໍ່ບັນດາຄະນະກໍາມະການຄຸ້ມຄອງຫຼັກຊັບທີ່ໄດ້ປະກອບສ່ວນເຂົ້າໃນການດໍາເນີນວຽກງານດ້ວຍຜົນສໍາເລັດຢ່າງຈິບງາມ; ພ້ອມກັນພັດທະນາຕະຫຼາດທຶນ ກ້າວສູ່ຄວາມເຂັ້ມແຂງແລະ ຂໍມອບໃຫ້ທ່ານຜູ້ວ່າການ, ຮອງປະທານ ຄຄຊ-ຜູ້ປະຈໍາການ ແລະ ສຄຄຊ ຈົ່ງຮີບຮ້ອນປະສານສົມທົບກັບຂະແໜງການກ່ຽວຂ້ອງຕ່າງໆ ເພື່ອຜັນຂະຫຍາຍເນື້ອໃນຈິດໃຈກອງປະຊຸມຄັ້ງນີ້ເປັນໜ້າວຽກລະອຽດ ດ້ວຍຄວາມເປັນເຈົ້າການ ແລະ ຄວາມຮັບຜິດຊອບສູງ; ພ້ອມນັ້ນ, ກໍ່ຕ້ອງມີການຕິດຕາມກວດກາແລະສະຫຼຸບຖອດຖອນບົດຮຽນແຕ່ລະໄລຍະຢ່າງເໝາະສົມ; ຈາກນັ້ນ,ໃຫ້ສະຫຼຸບຕີລາຄາການຈັດຕັ້ງປະຕິບັດດັ່ງກ່າວ ເພື່ອລາຍງານຕໍ່ກອງປະຊຸມຄະນະກໍາມະການຄຸ້ມຄອງຫຼັກຊັບຄັ້ງຕໍ່ໄປ.

**# ຂ່າວ-ພາບ: ຣັດສະໝີ ດວງສັດຈະ**

**ຊາດພັດທະນາ ພາເສດຖະກິດກ້າວໄກ ພ້ອມກັນນໍາໃຊ້ເງິນກີບ**